**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ນະຄອນຫຼວງວຽງຈັນ

ພະແນກ ໂຍທາທິການ ແລະ ຂົນສົ່ງ

ເລກທີ 3356 /ຍທຂ.ນວ

ລົງວັນທີ 11 JUN 2020

# ສັນຍາດັດແກ້ເພີ່ມເຕີມ

ໂຄງການກໍ່ສ້າງເສັ້ນທາງເລກ 11 (ຕອນໃຕ້) ແຕ່ຊຽງຄວນ-ບ້ານຜ້າວ, ຕອນທາງແຕ່ບ້ານໜາກນາວເໜືອ-ບ້ານຜ້າວ, ເມືອງປາກງື່ມ, ນະຄອນຫຼວງວຽງຈັນ, ມີຄວາມຍາວ 32.5 ກິໂລແມັດ, ຄວາມກ້ວາງໜ້າທາງ 11 ແມັດ.

**ລະຫວ່າງ**

ພະພະແນກ ໂຍທາທິການ ແລະ ຂົນສົ່ງ ນະຄອນຫລວງວຽງຈັນ, ຊຶ່ງມີສຳນັກງານຕັ້ງຢູ່ຖະໜົນເຊດຖາທິຣາດ ບ້ານເກົ້າຍອດ, ເມືອງສີສັດຕະນາກ, ນະຄອນຫລວງວຽງຈັນ,ໂທລະສັບ : 021-212629 ; ແຟັກ : 021-252690 ຕໍ່ໄປນີ້ເອີ້ນວ່າ : " ເຈົ້າຂອງໂຄງການ ".

**ແລະ**

ກຸ່ມບໍລິສັດ ຈຳປາຄຳ ຈຳກັດຜູ້ດຽວ, ຊຶ່ງມີສຳນັກງານຕັ້ງຢູ່ : ບ້ານທ່າຫີນເໜືອ, ນະຄອນປາກເຊ, ແຂວງຈຳປາສັກ, ໂທລະສັບ : 020-55530342 ຕໍ່ໄປນີ້ເອີ້ນວ່າ:" ຜູ້ຮັບເໝົາ ".

- ອີງຕາມ ຂໍ້ຕົກລົງຂອງທ່ານເຈົ້າຄອງນະຄອນຫຼວງວຽງຈັນ ສະບັບເລກທີ 338/ຈນວ, ລົງວັນທີ 05 ມີຖຸນາ 2020 ວ່າດ້ວຍການຮັບຮູ້ການປ່ຽນໂອນສັນຍາໂຄງການກໍ່ສ້າງເສັ້ນທາງເລກທີ 11 (ຕອນໃຕ້) ເມືອງປາກງື່ມ, ນະຄອນຫຼວງວຽງຈັນ, ລະຫວ່າງບໍລິສັດຟອງສະໝຸດລົງທຶນກໍ່ສ້າງຂົວ-ທາງຈຳກັດຜູ້ດຽວ ກັບກຸ່ມບໍລິສັດ ຈຳປາຄຳຈຳກັດຜູ້ດຽວ.
- ອີງຕາມ ສັນຍາຮັບເໝົາກໍ່ສ້າງໂຄງການກໍ່ສ້າງເສັ້ນທາງເລກທີ 11 (ຕອນໃຕ້) ເມືອງປາກງື່ມ, ນະຄອນຫຼວງ ວຽງຈັນ, ສະບັບເລກທີ 3620/ຍທຂ.ນວ, ລົງວັນທີ 17 ກັນຍາ 2012.
- ອີງຕາມ ໃບມອບສິດລະຫວ່າງບໍລິສັດຟອງສະໝຸດລົງທຶນກໍ່ສ້າງຂົວ-ທາງຈຳກັດຜູ້ດຽວ ແລະ ກຸ່ມບໍລິສັດຈຳປາຄຳຈຳກັດຜູ້ດຽວ ສະບັບເລກທີ 1208/ຟສໝ, ລົງວັນທີ 25/02/2020.

ທັງສອງຝ່າຍໄດ້ຕົກລົງເຫັນດີເປັນເອກະພາບກັນເຮັດສັນຍາສະບັບນີ້ຂຶ້ນເປັນສັນຍາດັດແກ້ເພີ່ມເຕີມ ເພື່ອສືບຕໍ່ປະຕິບັດວຽກຮັບເໝົາກໍ່ສ້າງໃຫ້ສຳເລັດ 100% ເຊິ່ງມີເນື້ອໃນລະອຽດດັ່ງລຸ່ມນີ້ :

**ມາດຕາ 1** : ເງື່ອນໄຂ ແລະ ເນື້ອໃນຂອງສັນຍາດັດແກ້ເພີ່ມເຕີມ.

1.1. ຖ້າຫາກບໍ່ໄດ້ມີການລະບຸເພີ່ມເຕີມ ຫຼື ປ່ຽນແປງເປັນຢ່າງອື່ນຢູ່ໃນສັນຍາດັດແກ້ເພີ່ມເຕີມສະບັບນີ້ ທຸກໆເງື່ອນໄຂ ແລະ ເນື້ອໃນຂອງສັນຍາທັງໝົດ ແມ່ນໃຫ້ອີງຕາມສັນຍາສະບັບເລກທີ 3620/ຍທຂ.ນວ, ລົງວັນທີ 17 ກັນຍາ 2012 ເຊິ່ງເປັນສັນຍາສະບັບເດີມ.

1.2. ຈຸດປະສົງ ແລະ ລະດັບຄາດໝາຍ : (ປ່ຽນແທນມາດຕາ 1.1 ຂອງສັນຍາສະບັບເດີມ).

- ສັນຍາສະບັບນີ້ສ້າງຂຶ້ນເພື່ອເປັນຫຼັກຖານໃຫ້ແກ່ການສືບຕໍ່ກໍ່ສ້າງເສັ້ນທາງເບຕົງເສີມເຫຼັກເລກທີ 11 (ຕອນໃຕ້) ຕອນທາງແຕ່ບ້ານໝາກນາວເໜືອ ຫາ ບ້ານຜ້າວ, ມີຄວາມຍາວ 32,5 ກິໂລແມັດ, ກໍ່ສ້າງໜ້າທາງກວ້າງ 11 ແມັດ, ປູເບຕົງ 9 ແມັດ ແລະ ມີບ່າທາງເບື້ອງລະ 1 ແມັດ.
- ລວມມູນຄ່າທັງໝົດແມ່ນ **49.809.963,24 USD** (ສີ່ສິບເກົ້າລ້ານ ແປດແສນເກົ້າພັນ ເກົ້າຮ້ອຍຫົກສິບຫ້າຈຸດຊາວສີ່ໂດລາສະຫະລັດ), ຄິດໄລ່ເປັນອັດຕາແລກປ່ຽນ 1 USD = 8.000 ກີບ (ອັດຕາແລກປ່ຽນໃນມື້ເຊັນສັນຍາສະບັບເດີມ)
- ມູນຄ່າຂອງສັນຍາດັດແກ້ເພີ່ມເຕີມ ຫຼຸດຈາກມູນຄ່າຂອງສັນຍາສະບັບເດີມ ເນື່ອງຈາກວ່າ : ອີງໃສ່ບົດສະຫຼຸບຜົນການກວດກາ 14 ໂຄງການລົງທຶນຂອງລັດທີ່ນະຄອນຫຼວງວຽງຈັນສະເໜີດັດແກ້ຫຼຸດມູນຄ່າ ແລະ ດັດແກ້ເພີ່ມມູນຄ່າຈາກທີ່ສະພາຮັບຮອງ, ສະບັບລົງວັນທີ 23 ເມສາ 2020 ມູນຄ່າຂອງສັນຍາສະບັບເດີມແມ່ນ 53.693.405,24 USD. ໃນນີ້ໄດ້ຕັດລາຍການປະກັນໄພບຸກຄົນທີສາມ, ວຽກຕອບສະ ໜອງຫ້ອງການ ແລະ ອຸປະກອນ, ຈັດຊື້ພາຫານະ ແລະ ເງິນແຮໂຄງການລວມທັງໝົດຈຳນວນ 3.883.440 USD ອອກ ເພື່ອໃຫ້ສອດຄ່ອງກັບດຳລັດແນະນຳປະຕິບັດກົດໝາຍວ່າດ້ວຍການລົງທຶນຂອງລັດສະບັບເລກທີ 431/ລບ, ລົງວັນທີ 26 ພະຈິກ 2014, ເພາະສະນັ້ນ ມາດຕາ 5.7 ຂອງສັນຍາສະບັບເດີມແມ່ນບໍ່ໄດ້ນຳໃຊ້.

**ມາດຕາ 2** : ໄລຍະການກໍ່ສ້າງ ແລະ ຊຳລະໃຫ້ແກ່ຜູ້ຮັບເໝົາ (ປ່ຽນແທນມາດຕາ 4 ຂອງສັນຍາສະບັບເດີມ).

2.1. ໄລຍະການກໍ່ສ້າງ (ໄລຍະສືບຕໍ່ສັນຍາ).

- ໄລຍະສືບຕໍ່ສັນຍາການກໍ່ສ້າງແມ່ນ 24 ເດືອນ (ຊາວສີ່ເດືອນ) **ນັບແຕ່ວັນທີ 10 ມິຖຸນາ 2020 ຮອດ ວັນທີ 10 ມິຖຸນາ 2022.**

2.2. ການຊຳລະໃຫ້ຜູ້ຮັບເໝົາ.

- ຜູ້ຮັບເໝົາເປັນຜູ້ລົງທຶນກໍ່ສ້າງທັງໝົດຕາມມູນຄ່າທີ່ໄດ້ລະບຸໄວ້ໃນມາດຕາ 1.2 ຂອງສັນຍາສະບັບນີ້ ແລະ ເຈົ້າຂອງໂຄງການຈະຊຳລະເງິນໃຫ້ແກ່ຜູ້ຮັບເໝົາພາຍຫຼັງກໍ່ສ້າງສຳເລັດ 100% ເປັນແຕ່ລະປີຕາມສັດສ່ວນທີ່ລັດຖະບານຈັດສັນໃຫ້.

**ມາດຕາ 3 :** ວ່າດ້ວຍຂໍ້ບັນຍັດສຸດທ້າຍ.

- ສັນຍາສະບັບນີ້ມີ 03 ມາດຕາ ຂຽນເປັນພາສາລາວ, ມີຈຳນວນ 10 ສະບັບຕົ້ນ ແລະ ມີຜົນສັກສິດນັບແຕ່ທັງສອງຝ່າຍ ພ້ອມດ້ວຍພະຍານໄດ້ລົງລາຍເຊັນຮ່ວມກັນເປັນຕົ້ນໄປ.

" ເຈົ້າຂອງໂຄງການ"

ຫົວໜ້າພະແນກ ໂຍທາທິການ ແລະ ຂົນສົ່ງ

ນະຄອນຫຼວງວຽງຈັນ

ສຸລິວັນ ພິມມະຫາໄຊ

" ຜູ້ຮັບເໝົາ"

ກຸ່ມບໍລິສັດ ຈຳປາຄຳ ຈຳກັດຜູ້ດຽວ

ໄພທູນ ປະທຸມທອງ

Phaitoun PATHOUMTHONG

ພະຍານ " ເຈົ້າຂອງໂຄງການ"

ຮກ. ຫົວໜ້າພະແນກແຜນການ ແລະ ການລົງທຶນ

ນະຄອນຫຼວງວຽງຈັນ

ທະນົງສິນ ແສງພະວົງ

ພະຍານ " ຜູ້ຮັບເໝົາ"

ບໍລິສັດ ຟອງສະໝຸດລົງທຶນກໍ່ສ້າງຂົວ-ທາງ

ຈຳກັດຜູ້ດຽວ

ເບຍລະພາ ອໍລະຈິດ

ສົມໃຈ ສຸວັນນະເມທີ

ນະຄອນຫຼວງວຽງຈັນ

ພະແນກຍຸຕິທຳ

ເລກທີ ຊ.ຈ......./ຫທສ, ວັນທີ 12.6.20

ຊື່ຜູ້ເປັນ.......................

ຄ່າທຳນຽມ.......................

(ຝ່າຍຕົວໜັງສື).......................

ຄ່າບໍລິການ.......................

(ຝ່າຍຕົວໜັງສື).......................

ຫົວໜ້າຫ້ອງການທະບຽນສານ